## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການເຮັດນາສວນຮົ້ວໄຮ່

(ສະບັບທົດລອງ)



ຂຽນໂດຍ: ທ່ານ ນາງ ຍອຍຄໍາ ຄໍາພະວົງສາ

ຂໍ້ມູນຈາກ: ບ້ານໂພນທອງ ເມືອງ ນາຊາຍທອງ

ນະຄອນຫລວງວຽງຈັນ

ປີ 2006

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com

## ຄວາມຮູ້ພູມປັນຍາທ້ອງຖິ່ນ

# ການເຮັດນາສວນຮົ້ວໄຮ່

ຮິບໂຮມ ແລະຈັດໜ້າໂດຍ: ນາງ ນ່າ ຄຳເຮືອງ

ຮຽບຮຽງໂດຍ: ອ.ຈ ໂພໄຊ ຈັນທະວົງສາ

ອ.ຈ ເກດມະນີ ບັນດາສັກ

ອ.ຈ ຄຳໄຫວ

ອ.ຈ ລົ່ງ ແສງດາລາ

ອ.ຈ ທອງຂັນ

ແຕ້ມໂດຍ: ທ້າວ ສົມເພັດ ຈັນທະລາ

ເຈົ້າຂອງ: ພະແນກສຶກສານະຄອນຫລວງວຽງຈັນແລະ
ສູນອົບຮົມຮ່ວມພັດທະນາ

PDF created with pdfFactory Pro trial version www.pdffactory.com

# ຄຳນຳ

ປື້ມພູມປັນຍາທ້ອງຖິ່ນຫົວນີ້ໄດ້ມາຈາກການຂຽນຂອງຊາວບ້ານແລະອາສາສະໝັກເຊິ່ງໄດ້ຮຽບຮຽງເບື້ອງຕົ້ນຈາກຄະນະອຳນວຍການສູນອົບຮົມຮ່ວມພັດທະນາແລະພະແນກສຶກສານະຄອນຫຼວງວຽງຈັນ

ປື້ມຫົວນ້ອຍຫົວນີ້ໄດ້ບັນຈຸເນື້ອໃນທີ່ເວົ້າເຖິງຫົວຂໍ້ໃດໜຶ່ງໂດຍມີຫຼາຍກິດຈະກຳທີ່ຈະເປັນການທົດລອງເອົາຄວາມຮູ້ທ້ອງຖິ່ນເຂົ້ານຳພາແລະສິດສອນນັກຮຽນຊັ້ນປະຖົມໂດຍເອົາບົດທີ່ງ່າຍສອນຊັ້ນປະຖົມ ປໍ 1 ປໍ 2 ແລະບົດທີ່ຍາກກໍສອນຊັ້ນໃຫຍ່ຂຶ້ນໄປ.

ຄະນະຈັດທຳຫວັງຄິດວ່າປື້ມຫົວນີ້ຄົງເປັນບ່ອນອີງອັນໜຶ່ງໃຫ້ແກ່ຄູອາຈານກໍຄືອາສາສະໝັກທີ່ຈະໄປສອນເດັກປະຖົມບໍ່ຫຼາຍກໍໜ້ອຍ

ຄະນະຈັດທຳຄິດວ່າຍັງມີຫຼາຍເນື້ອໃນທີ່ບໍ່ທັນພຽງພໍແລະຂາດໄປຫວັງວ່າຄົງໄດ້ຮັບການຕິຊົມຈາກທຸກທ່ານ ພວກເຮົາພ້ອມທີ່ຈະປັບປຸງນຕາມຄວາມເໝາະສົມ.

ຄະນະຈັດທຳ

PDF created with pdfFactory Pro trial version www.pdffactory.com

## ຄວາມເປັນມາຂອງການສ້າງນາສວນຮົ້ວໄຮ່

ໃນເມື່ອກ່ອນປູ່ຍາຕາຍາຍໄດ້ທຳມາຫາກິນຕາມຊົນນະບົດທຳໄຮ່ທຳນາດຳລົງຊີວິດແບບປະຖົມປະຖານຫາເຊົ້າກິນຄ່ຳ ອີງໃສ່ທຳມະຊາດເປັນສ່ວນໃຫຍ່ໃນການທຳມາຫາກິນການປູກເຂົ້າ,ປູກຜັກກິນນອກເໜືອທີ່ເກັບກິນຕາມທຳມະຊາດຢູ່ກ່ອນແລ້ວມາປູກກິນເອງໃນຄອບຄົວຕົນເອງເປັນຮູບແບບການຜະລິດ ເພື່ອກຸ້ມຕົນເອງຮັບໃຊ້ໃນຄອບຄົວເຮືອນຊານຊ່ວຍກັນສັບຊ່າວ, ຖາກຖາງປ່າເຮັດໄຮ່ເຮັດນາ, ເຮັດຮົ້ວເຮັດ ສວນທຳມາຫາກິນແບບງ່າຍໆເພື່ອໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າດີຂຶ້ນສືບຕໍ່ກັນມາຈົນເຖິງປະຈຸບັນນີ້...

PDF created with pdfFactory Pro trial version www.pdffactory.com

<u>**ອຸປະກອນໃນການສ້າງນາສວນຮົ້ວໄຮ່.**</u>

ເຄື່ອງມືໃນການສ້າງນາສວນຮົ້ວໄຮ່ແຕ່ກ່ອນເພິ່ນນຳໃຊ້ອຸປະກອນ ດັ່ງລຸ່ມນີ້:

ໄຖ



ຄາດ



PDF created with pdfFactory Pro trial version www.pdffactory.com

ຊວ້ານ



ຈົກ



ກ່ຽວ



PDF created with pdfFactory Pro trial version www.pdffactory.com

ພ້າ, ມີດ



ສຽມ



## ຂັ້ນຕອນໃນການສ້ານາສວນຮົ້ວໄຮ່.

ຂັ້ນຕອນແມ່ນພວກເຮົາຈະໄຖຊຸດ ແລ້ວຄາດພວນດິນໃສ່ຝຸ່ນກະກຽມດິນດີແລ້ວ ກໍຊອກຫາແນວພັນເຂົ້າ ຫຼືແນວພັນຂອງຜັກທີ່ເຮົາຕ້ອງການຈະປູກ,ຖ້າແມ່ນເຮັດນາກໍກຽມເອົາເຂົ້າເປືອກແນວພັນທີ່ດີມາແຊ່ໃສ່ນໍ້າປະໄວ້ໄລຍະໜຶ່ງ ແລ້ວກໍນໍາເອົາແນວພັນເຂົ້າດັ່ງກ່າວມາຫວ່ານເຮັດກ້າແລ້ວກໍນໍາເອົາກ້າມາດໍາໃສ່ພື້ນທີ່ນາ ທີ່ເຮົາກຽມໄວ້ນັ້ນ.

PDF created with pdfFactory Pro trial version www.pdffactory.com

## ວິທີການສ້າງນາສວນຮົ້ວໄຮ່

ວິທີການສ້າງນາສວນຮົ້ວໄຮ່ແມ່ນເຮົາສັບຊ່າວຖາກຖາງປ່າ ກຽມພື້ນທີ່ແລ້ວກໍເອົາຄວາຍໄຖຄາດ ແລ້ວບົວລະບັດເບິ່ງປ່ອຍນ້ຳໃສ່ບໍ່ໃຫ້ຫຍ້າຮົກຈຳກັດສັດລ້ຽງບໍ່ໃຫ້ມາທຳລາຍສ້າງຄວາມເສຍຫາຍບ່ອນທີ່ເຮົາຈະເຮັດຕ້ອງໃສ່ຝຸ່ນກຽມດິນໃຫ້ດີ.

## ຄຸນປະໂຫຍດຂອງການສ້າງນາສວນຮົ້ວໄຮ່.

ການສ້າງນາສວນຮົ້ວໄຮ່ແມ່ນມີຄຸນປະໂຫຍດຫຼາຍແກ່ຄົນເຮົາໃນການທຳມາຫາກິນ ແລະການດຳລົງຊີວິດການເປັນຢູ່, ຊີວິດປະຈຳວັນຄອບຄົວຈະມີຢູ່ມີກິນອີ່ມໜຳສຳລານບໍ່ອຶດຢາກໝາກແຫ້ງພໍຢູ່ພໍກິນຮູ້ນຳໃຊ້ສະຖານທີ່ ໃຫ້ເກີດປະໂຫຍດອອກໝາກອອກຜົນໃຫ້ແກ່ຕົນເອງ ແລະຄອບຄົວໃຫ້ຄົນເຮົາຮູ້ຈັກການທຳມາຫາກິນປະກອບສ່ວນເຫື່ອແຮງຂອງຕົນເອງເຂົ້າໃສ່ໃນການຜະລິດກຸ້ມຕົນເອງພາຍໃນຄອບຄົວຂອງຕົນເອງ. ຖ້າເຮັດຫລາຍກໍສາມາດນຳຜົນຜະລິດນັ້ນອອກເປັນສິນຄ້າໄດ້.

PDF created with pdfFactory Pro trial version www.pdffactory.com

## ກາບ: ເຮັດນາຮົ້ວໄຮ່

| | |
|---|---|
| ພີ່ນ້ອງເອີຍ | ຢ່ານອນຢູ່ລ້າ |
| ປ່ອຍເວລາ | ໝູນໄປລ້າໆ |
| ຢ່າມົວຊ້າ | ຊ່ວຍກັນປູກສ້າງ |
| ດິນເປົ່າຫວ່າງ | ໃຫ້ເປັນຮົ້ວໄຮ່ |
| ເຮັດໃຫ້ໄດ້ | ເປັນເສດຖະກິດ |
| ເພື່ອຜະລິດ | ກິນແລະສົ່ງຂາຍ |
| ເຮັດໃຫ້ຫລາຍ | ໄປທົ່ວບ້ານເຮົາ |
| ບໍ່ໄດ້ເຊົາ | ຊ່ວຍກັນສ້າງສາ |

PDF created with pdfFactory Pro trial version www.pdffactory.com

## ເຊີ້ງ: ການເຮັດນາຮົ້ວໄຮ່

ໂອ່..ໂຮະ..ໂອ　　ໂຮະໂອໂຮະໂອ
ມາພວກເຮົາມາ　　ພ້ອມທັງພໍ່ແມ່
ເຖົ້າແກ່ທັງຫຼາຍ　　ເຮົາພາກັນໄປ
ກ່ຽວເຂົ້າທົ່ງໃຫຍ່　　ມາໃສ່ເລົ້າເຮົາ
ໄດ້ເຂົ້າເຕັມເລົ້າ　　ຂາຍສົ່ງຕະຫຼາດ
ທັງຂາຍຜັກກາດ　　ຫອມປ້ອມຫອມຊີ
ເປັນຄອບຄົວດີ　　ຮິາມີຄວາມສຸກ
ເຮົາຈະບໍ່ທຸກ　　ຄວາມຢູ່ຄວາມກິນ
ພວກເຮົາມ່ວນຍິນ　　ຢູ່ດີສະບາຍ
ເຮົາຈະບໍ່ກາຍ　　ເປັນຂ້ອຍຜູ້ອື່ນ
ພວກເຮົາຈົ່ງຕື່ນ　　ຢ່າມົວນອນເວັນ
ເຮົາຈຶ່ງຈະເປັນ　　ຄົນດີຂອງຊາດ
ໂຮ..ໂຮ..ໂຮ...　　ຮືວ.........

PDF created with pdfFactory Pro trial version www.pdffactory.com

## ເພງ: ເພີ່ມພູນການຜະລິດ

ມາເດີເຈົ້າມາກ່ງວເຂົ້າ ອອກແຮງງານມ່ວນຊື່ນ
ສ້າງຄວາມຟືດຟື້ນ ໃຫ້ຊີວິດລາບລື່ນ (*2)
ຄອບຄົວດີຂື້ນ ຢູ່ສຸກສະບາຍ
ໄດ້ເຂົ້າຫຼາຍໆ ເປັນສິນຄ້າສົ່ງຂາຍ (*2)
ໃຫ້ຄອບຄົວສົດໃສ ມີຄວາມສຸກຕະຫລອດໄປ
ຈະໄດ້ມີຄວາມ ຜາສຸກຕະຫຼອດໄປ...

## ລຳລ່ອງ: ການເຮັດນາສວນ

ໂອຍ..ໂອຍ່..ລະນໍຟ້າເອີຍ ຟ້າຮ້ອງຮ່ວນໆ
ຄັນຜູ້ໃດຢາກມ່ວນ ມາສ້າງໄຮ່ນາສວນ
ເປັນຂະບວນເດີລຸງ ຢ່າສູ່ນອນນໍດຽວລ້າ
ເຮັດສວນຄົວຫຼັງບ້ານ ປູກຜັກຫອມຊີ ບົ່ວ..
ສົ່ງໄປຂາຍຕະຫຼາດພ້ອມ ເອົາເງິນເຂົ້າໃສ່ຖົງ
ເຖິງເວລາເຈັບໄຂ້ ເຮົາຈະມີເງິນຈ່າຍ
ຊີວິດເຮົາລາບລື່ນ ໂອຍດີຂື້ນກວ່າແຕ່ຫຼັງ
ເດ.....ນໍ..... ໂອຍນໍ....ລະນາ

PDF created with pdfFactory Pro trial version www.pdffactory.com

<u>ຮູບ ແລະ ປະຫວັດຂອງຜູ້ຂຽນ</u>



ຊື່ ນ. ຍອຍຄຳ .ນາມສະກຸນ ຄຳພະວົງສາ

ອາຍຸ 46 ປີ, ອາຊີບ ເຮັດນາ

## <u>ເຫດຜົນຂອງການຂຽນປຶ້ມນີ້</u>:

ເພື່ອຢາກໃຫ້ລູກຫລານໄດ້ສືບທອດເອົາປຶ້ມຮຽນເກົ່າໂຕນີ້ໄປສຶກສາ. ຮຽນຮູ້ກ່ຽວກັບການສ້າງນາສວນເພື່ອຈະນຳເອົາໄປໃຊ້ໃຫ້ເກີດປະໂຫຍດແກ່ຄອບຄົວຂອງເຂົາເຈົ້າອຸດົມສົມບູນ.

PDF created with pdfFactory Pro trial version www.pdffactory.com

PDF created with pdfFactory Pro trial version www.pdffactory.com